*ຫ້ອງການຂ່າວ*
**ກະຊວງຄວາມປອດໄພແຫ່ງຊ
າດຂອງສະຫະຣັດ**
500 C Street, SW
Washington, DC  20472

FEMA

ວັນທີ່  6  ຕຸລາ  2006
ເລກທີ່  06-142
ຕິດຕໍ່: ໂຕະຂ່າວຂອງ
ອົງການບໍຣິຫານເຫດສຸກເສີນແຫ່ງຊາດ
(FEMA)
(202) 646-4600

# ຖະແລງຂ່າວ

## ເຮືອນເທຣເລີ໌ຊຶ່ງເຂົ້າຫາໄດ້ສຳຫລັບຄົນທີ່ເສັຍອົງຄະ
## ມີໃຫ້ຈາກອົງການບໍຣິຫານເຫດສຸກເສີນແຫ່ງຊາດຫລື FEMA

ກຸງວໍຊິງເຕິນ, ດີ.ຊີ.-ໃນຖານະເປັນພາກສ່ວນໜຶ່ງຂອງການຕົກລົງໃນຄະດີທີ່ຟ້ອງຮ່ວມກັນ, Brou v. FEMA, ຊຶ່ງໄດ້ຮັບການເຫັນດີໂດຍສານຂອງຣັຖະບານແຫ່ງຊາດປະຈຳເມືອງໃນເຂດຕາເວັນອອກຂອງຣັດຫລຸຍຊີອານາ ໃນວັນທີ່ 26 ກັນຍາ 2006, ອົງການບໍຣິຫານເຫດສຸກເສີນແຫ່ງຊາດ ຫລື FEMA ຂອງກະຊວງຄວາມປອດໄພແຫ່ງຊາດ ໄດ້ຕິດຕໍ່ມາເພື່ອແຈ້ງໃຫ້ບັນດາຜູ້ທີ່ຫລົບໄພທີ່ເສັຍອົງຄະຈາກລົມພາຍຸ ແຄທຣີນາ ແລະ ຣີຕາ ຫລືຜູ້ທີ່ອາໄສຢູ່ກັບບຸກຄົນທີ່ເສັຍອົງຄະ, ວ່າມີເຮືອນ ເທຣເລີ໌ ໄວ້ໃຫ້ເພື່ອຢູ່ອາໄສເປັນການຊົ່ວຄາວ. ຜູ້ທີ່ຫລົບໄພທີ່ເສັຍອົງຄະຈາກລົມພາຍຸ ແຄທຣີນາ ແລະ ຣີຕາ ຊຶ່ງບໍ່ສາມາດເຂົ້າຫາເຮືອນຢູ່ຊົ່ວ ໄດ້ຄວນຈະຕິດຕໍ່ກັບFEMA ແລະບອກຄວາມຕ້ອງການຂອງຕົນໃຫ້ເພິ່ນຊາບ, ເຖິງແມ່ນວ່າຕົນໄດ້ເຄີຍຕິດຕໍ່ກັບ FEMA ກ່ຽວກັບຄວາມຈຳເປັນເຣື່ອງເຮືອນຢູ່ມາກ່ອນແລ້ວກໍຕາມ.

ຄົນທີ່ເສັຍອົງຄະ, ໝາຍຄວາມວ່າແມ່ນການບໍ່ສົມປະກອບທີ່ຈຳກັດກິຈະກຳທີ່ສຳຄັນໆຂອງຊີວິດອັນໜຶ່ງ ຫລືຫລາຍອັນ ເຊັ່ນ, ການຍ່າງ, ການເຫັນ, ການໄດ້ຍິນ, ຫລືການປາກເວົ້າ, ອາດສາມາດໄດ້ຮັບການເຂົ້າຫາເຮືອນ ເທຣເລີ໌ ຈາກ FEMA ໄດ້. ອີງຕາມປະເພດຂອງການເສັຍອົງຄະ, ບຸກຄົນ ແລະ/ຫລືຄອບຄົວທີ່ເຂົາເຈົ້າອາໄສຢູ່ນຳອາດໄດ້ຮັບເຮືອນເທຣເລີ໌ ຫລັງໜຶ່ງທີ່ມີຂົວກ່າຍເຂົ້າໄປ, ມີເນື້ອທີ່ພຽງພໍສຳຫລັບການໝູນຕັ່ງອີ້ທີ່ມີລໍ້ໄດ້, ເຂົ້າຫາອ່າງອາບນ້ຳ ຫລືຝັກບົວອາບນ້ຳໄດ້, ເຊັ່ນດຽວກັບຮາວຈັບໃນບ່ອນອາບນ້ຳ, ອ່າງອາບນ້ຳ ແລະໃກ້ສ້ວມຖ່າຍ.

ຄົນທີ່ເສັຍອົງຄະ, ຫລືຄົນທີ່ອາໄສຢູ່ກັບຜູ້ໃດຜູ້ໜຶ່ງທີ່ເສັຍອົງຄະ, ຊຶ່ງຕ້ອງການເຮືອນເທຣເລີ໌ຊຶ່ງເຂົ້າຫາໄດ້, ຄວນຈະໂທຣະສັບຫາເລກ 1-866-496-4297 (ຜູ້ຫລົບໄພຣັດຫລຸຍຊີອານາ) ແລະ 1-888-294-2820 (ຜູ້ຫລົບໄພຣັດມິສສີສສິປປີ), ຕັ້ງແຕ່ 8 ໂມງເຊົ້າ ຫາ 6 ໂມງແລງ, ວັນຈັນ ຫາວັນເສົາ, (ເລກໂທຣະສັບ TTY ສຳຫລັບທັງສອງຣັດຄືຫລຸຍຊີອານາ ແລະມິສສີສ ສິປປີ ແມ່ນ 1-800-462-7585). ຜູ້ທີ່ໂທຣະສັບເລກບໍ່ເສັຍເງິນຄວນກະກຽມທີ່ຈະສົນທະນາປະເພດຂອງການເສັຍອົງຄະ ແລະປະເພດຂອງຄຸນະສົມບັດໃນການເຂົ້າຫາທີ່ຕົນຕ້ອງການໄວ້.

FEMA ຈະຊ່ວຍເຫລືອບຸກຄົນທີ່ເສັຍອົງຄະດ້ວຍການຈັດຫາເຮືອນເທຣເລີ໌ໃຫ້ຫລັງໜຶ່ງ, ດັດແປງເຮືອນເທຣເລີ໌ທີ່ບຸກຄົນຜູ້ນັ້ນມີຢູ່ໃນປະຈຸບັນເພື່ອເຮັດໃຫ້ມັນເຂົ້າຫາໄດ້, ຫລືຊອກຫາຜູ້ທີ່ຕ້ອງການບ່ອນເໝາະສົມສຳຫລັບອາໄສຢູ່ໃຫ້.

ເຮືອນເທຣເລີ໌ຊຶ່ງເຂົ້າຫາໄດ້ອາດຈະໃຊ້ເວລາສູງເຖິງ 90 ວັນເພື່ອທີ່ຈະສົ່ງມອບໃຫ້ໄດ້, ຫລືຍາວນານກວ່ານັ້ນ ຖ້າຫາກຜູ້ຮ້ອງຂໍບໍ່ມີບ່ອນເໝາະສົມສຳຫລັບເຮືອນເທຣເລີ໌. ການປ່ຽນແປງທີ່ຈະເຮັດໃຫ້ເຮືອນເທຣເລີ໌ຊຶ່ງເຂົ້າຫາໄດ້ຫລັງປະຈຸບັນອາດໃຊ້ເວລາສູງເຖິງ 60 ວັນເພື່ອທີ່ຈະເສັດສິ້ນ.

--ມີຕໍ່--

**ການເຂົ້າຫາ ເທຣເລີຣ໌ ຂອງ FEMA - ໜ້າສອງ**

ບຸກຄົນທີ່ເສັຍອົງຄະຜູ້ຊຶ່ງບໍ່ໄດ້ຮັບເຮືອນເທຣເລີຣ໌ຊຶ່ງເຂົ້າຫາໄດ້ຄວນຈະຕິດຕໍ່ກັບອົງການທີ່ 1-866-496-4297 (ຜູ້ຫລິບໂພຣັດຫລຸຍຊີອານາ) ແລະ 1-888-294-2820 (ຜູ້ຫລິບໂພຣັດມິສສີສສີປປີ). ເພື່ອທີ່ຈະໄດ້ເຮືອນເທຣເລີຣ໌ຊຶ່ງເຂົ້າຫາຫລັງໜຶ່ງໄດ້ພາຍໃນເວລາໃນໃບປະກາດນີ້, ທ່ານຈະຕ້ອງຕິດຕໍ່ກັບ FEMA ກ່ອນໜ້າວັນທີ່ **9 ພຶດສະຈິກາ 2007.**

FEMA ບໍຣິຫານການຕອບສນອງແຫ່ງຊາດ ແລະການພຍາ ຍາມໃນການຟື້ນຟູຫລັງຈາກເຫດໄພແຫ່ງຊາດ. FEMA ຍັງ ຣິເຣີ່ມໃຫ້ມີກິຈະກຳການບັນເທົາຕ່າງໆ, ເຮັດວຽກຮ່ວມກັບຜູ້ຈັດ ການເຫດສຸກເສີນຂອງຣັດ ແລະຂອງທ້ອງຖິ່ນ, ແລະບໍຣິຫານໂຄງການປະກັນໄພນໍ້າຖ້ວມແຫ່ງຊາດ. FEMA ໄດ້ກາຍມາ ເປັນພາກສ່ວນໜຶ່ງຂອງກະຊວງຄວາມປອດໄພແຫ່ງຊາດຂອງສະຫະຣັດໃນ ວັນທີ່ 1 ມີນາ 2003.

**ໝາຍເຫດສຳຫລັບຜູ້ຜະລິດ:** MP3 ທີ່ເປັນພາສາອັງກິດ ແລະພາສາສະແປນິຊ ຂອງ PSA ຊຶ່ງຜະລິດໂດຍອົງການບໍຣິຫານເຫດສຸກເສີນແຫ່ງຊາດກໍມີໄວ້ໃຫ້ສຳຫລັບ ດາວນ໌ໂຫລດ ໄດ້ທີ່www.fema.gov/radio